# ວິຖີຊີວິດການເຮັດວຽກຂອງຈີນ ກຳລັງກາຍເປັນ "ສີຂຽວ"



ເປັນເວລາດົນນານ, ຜູ້ຄົນຄິດວ່າການຫຼຸດຜ່ອນການປ່ອຍກາກບອນໝາຍເຖິງ “ຄວາມບໍ່ສະດວກ” ແລະ “ການເສຍສະຫຼະປະສິດການ”. ແຕ່ພະນັກງານຈີນນັບມື້ນັບຫຼາຍ ກຳລັງພິສູດດ້ວຍການກະທຳວ່າແມ່ນກົງກັນຂ້າມ.

“ບົດລາຍງານການເຮັດວຽກແບບກາກບອນຕ່ຳຂອງວິສາຫະກິດ 2026” ຂອງຈີນ ສະແດງໃຫ້ເຫັນວ່າ 63% ຂອງບໍລິສັດໄດ້ນຳໃຊ້ລະບົບທີ່ບໍ່ໃຊ້ເຈ້ຍ ແລະ ໂຄງການປະຢັດພະລັງງານ, ເຊິ່ງຊ່ວຍຫຼຸດຜ່ອນປະລິມານຂີ້ເຫຍື້ອຕໍ່ຫົວຄົນໃນບ່ອນເຮັດວຽກໄດ້ 40%. ຈາກການນຳກັບມາໃຊ້ໃໝ່ຂອງເຄື່ອງເຟີນີເຈີເກົ່າ, ການແລກປ່ຽນຄະແນນໃນບັນຊີກາກບອນເພື່ອຂໍກູ້ຢືມ, ຈົນເຖິງ “ພະຍາດອາຊີບສີຂຽວ” ໃນໂຮງງານ, ການປະຕິບັດທີ່ໜ້າສົນໃຈເຫຼົ່ານີ້ບໍ່ພຽງແຕ່ມີປະສິດທິພາບ ແລະ ເປັນຈິງເທົ່ານັ້ນ, ແຕ່ຍັງໄດ້ຮັບການຍອມຮັບ ແລະ ມີສ່ວນຮ່ວມຈາກຜູ້ຄົນນັບມື້ນັບຫຼາຍຂຶ້ນ.



**ເຟີນີເຈີເກົ່າກາຍເປັນ “ປ່າໄມ້” ກາກບອນຕ່ຳ**

ໃນຫ້ອງວາງສະແດງຂອງ ບໍລິສັດ ເຟີນີເຈີ ໝູນວຽນ ຕົ້ນໄມ້ທີສອງ ຈຳກັດ ທີ່ນະຄອນເຊີນເຈີ້ນ, ຕົວເລກທີ່ກະພິບຢູ່ເທິງໜ້າຈໍມີຈັງຫວະຄືກັບການເຕັ້ນຂອງຫົວໃຈ: ລວມສະສົມເຟີນີເຈີຫ້ອງການທີ່ນຳກັບມາໃຊ້ໃໝ່ໄດ້ 122.185 ຊຸດ, ຫຼຸດຜ່ອນການບໍລິໂພກໄມ້ 1.472.878 ກິໂລກຣາມ,ແລະ ຫຼຸດຜ່ອນການປ່ອຍກາກບອນ 35,320.095 ກິໂລກຣາມ ນີ້ແມ່ນ “ຜົນງານ” 17 ປີດ້ານເສດຖະກິດໝູນວຽນຂອງຜູ້ກໍ່ຕັ້ງ ແລະ ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຕົ້ນໄມ້ທີສອງ ກໍຄື ທ່ານ ອູຫາຍຄາ, ແຕ່ລາວພັດເວົ້າຄ່ອຍໆວ່າ “ມັນກໍຄືການເກັບຂີ້ເຫຍື້ອ”.

ໃນປີ 2009, ທ່ານ ອູຫາຍຄາ ຍັງຄົງຂາຍເຄື່ອງເຟີນີເຈີຫ້ອງການໃໝ່ຢູ່ປັກກິ່ງ. ມື້ໜຶ່ງ, ລາວໄດ້ຊ່ວຍລູກຄ້າຂາຍເຄື່ອງເຟີນີເຈີເກົ່າຈຳນວນໜຶ່ງ, ລາວໄດ້ຄົ້ນພົບວ່າ: “ສິ່ງເສດເຫຼືອ” ທີ່ບໍລິສັດໃຫຍ່ຖິ້ມໄປນັ້ນ, ໃນສາຍຕາຂອງບໍລິສັດທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ ລ້ວນແຕ່ຖືເປັນສິ່ງທີ່ມີຄຸນຄ່າສູງ ແລະ ລາຄາຖືກທີ່ພວກເຂົາປາຖະໜາຢາກໄດ້. ເມື່ອເບິ່ງການເຂົ້າ ແລະ ການອອກ, ສ່ວນຕ່າງຂອງລາຄາ ເຮັດໃຫ້ລາວຮູ້ສຶກແຈ່ມໃສຂຶ້ນມາທັນທີ: ນີ້ບໍ່ແມ່ນໂອກາດທີ່ຈະລວຍ, ແຕ່ພວກມັນຍັງເປັນສິ່ງທີ່ບໍ່ໄດ້ເສຍຫາຍ, ແລ້ວເປັນຫຍັງຈຶ່ງຕ້ອງຖິ້ມມັນໄປ?

ລາວໄດ້ເຊົ່າເດີ່ນບ້ານນ້ອຍໆແຫ່ງໜຶ່ງຢູ່ຕະຫຼາດຕ້າລິວຊູ່ ທີ່ນອກທາງວົງແຫວນທີ 4 ຂອງປັກກິ່ງ ແລະ ໄດ້ຊອນຄູ່ຮ່ວມງານມາເຮັດນຳກັນ. ການປັບປຸງໃຫ້ໃໝ່, ການເກັບຮັກສາ ແລະ ການຂົນສົ່ງ, ທຸກຢ່າງຕ້ອງໄດ້ເຮັດດ້ວຍຕົນເອງ. ຄູ່ຮ່ວມງານສອງຄົນໄດ້ຖອນຕົວອອກໄປຍ້ອນທົນບໍ່ໄຫວ, ແຕ່ ທ່ານ ອູຫາຍຄາ ຍັງຄົງຮັກສາໂຕະຕັ່ງເກົ່າເຫຼົ່ານັ້ນໄວ້ ແລະ ໄດ້ຄົ້ນຄິດຮູບແບບ “ສາມາດໃຫ້ເຊົ່າ, ຂາຍ ແລະ ຊື້ຄືນໄດ້”. ເຄື່ອງເຟີນີເຈີທີ່ໄດ້ຮັບການສ້ອມແປງແລ້ວແມ່ນຂາຍໃນລາຄາພຽງແຕ່ 30% ຫາ 50% ຂອງລາຄາສິນຄ້າໃໝ່.

ປັດຈຸບັນ, ບໍລິສັດ ຕົ້ນໄມ້ທີສອງ ໄດ້ສ້າງຕັ້ງ 12 ສາຂາຢູ່ໃນຫຼາຍເມືອງ, ມີຫ້ອງວາງສະແດງ ແລະ ສາງເກັບສິນຄ້າຫຼາຍກວ່າ 80.000 ຕາແມັດ, ລາຄາເກັບເຄື່ອງເຟີນີເຈີເກົ່າແມ່ນ 10% ຫາ 30% ຂອງລາຄາເດີມ ແລະ ຫຼັງຈາກການປັບປຸງໃໝ່ແລ້ວແມ່ນນຳເຂົ້າສູ່ຕະຫຼາດດ້ວຍລາຄາ 30% ຫາ 50% ຂອງລາຄາເດີມ, ເຊິ່ງໄດ້ອຳນວຍການບໍລິການໃຫ້ແກ່ບໍລິສັດຫຼາຍກວ່າ 180.000 ແຫ່ງ.

**“ພະຍາດອາຊີບສີຂຽວ” ຂອງໂຮງງານແຫ່ງໜຶ່ງ**

ບໍລິສັດ ເພີເຟັກ (ຈີນ) ຈຳກັດ ສາຂາໂຮງງານຜະລິດພາກໃຕ້, ຕັ້ງຢູ່ນະຄອນຈິງຊານ, ແຂວງກວາງຕຸ້ງ. ທ່ານ ຫຼີນ ຊ່າວພີ, ພະນັກງານກວດສອບທາງເຄມີ-ຟີຊິກ ມັກເອີ້ນຕົນເອງວ່າ “ນັກມາຍາກົນຜູ້ປ່ຽນສິ່ງເສດເຫຼືອໃຫ້ເປັນສິ່ງທີ່ມີຄ່າ”. ບໍ່ດົນມານີ້, ລາວໄດ້ຈັດການສະແດງການເວົ້າຕະຫຼົກເທິງເວທີຄັ້ງໜຶ່ງ ໂດຍນຳເອົາຊີວິດປະຈຳວັນທີ່ກ່ຽວຂ້ອງກັບການຫຼຸດຜ່ອນການປ່ອຍກາກບອນມາສ້າງເປັນເລື່ອງຕະຫຼົກ.

ລາວໄດ້ເລີ່ມຕົ້ນການບັນຍາຍຈາກ 5 ມິຕິ. ດ້ານມິຕິ “ຄົນ” ນີ້, ທຸກຄົນລ້ວນແຕ່ມີ “ພະຍາດອາຊີບສີຂຽວ” ກໍຄື “ປະຢັດ”. ປະຢັດວັດຖຸດິບ, ປະຢັດພະລັງງານ, ປະຢັດໄຟຟ້າທຸກໆຫົວໜ່ວຍ. ປະຢັດຈົນໄດ້ຮັບການຢັ້ງຢືນເປັນ “ໂຮງງານສີຂຽວລະດັບຊາດ”. ສ່ວນ “ເຄື່ອງຈັກ” ນັ້ນ, ຢູ່ເທິງຫຼັງຄາໄດ້ຕິດຕັ້ງແຜງໂຊລ່າເຊວຂະໜາດ 47.540 ຕາແມັດ,ຄາດວ່າໃນປີ 2025 ຈະຜະລິດໄຟຟ້າໄດ້ຫຼາຍກວ່າ 4,7 ລ້ານກິໂລວັດໂມງ, ເຊິ່ງເທົ່າກັບການປູກຕົ້ນໄມ້ 2.300 ຕົ້ນ ແລະ ຫຼຸດຜ່ອນການປ່ອຍກາກບອນໄດ້ເກືອບ 2.000 ໂຕນ. “ວັດຖຸດິບ” ຍິ່ງໜ້າສົນໃຈກວ່າ: ນ້ຳເສຍທີ່ໄດ້ຮັບການບຳບັດແລ້ວແມ່ນຖືກນຳໄປຫົດຕົ້ນໄມ້ ແລະ ລ້າງຫ້ອງນ້ຳ, ສາມາດນຳມາໃຊ້ຄືນໄດ້ 34.000 ໂຕນຕໍ່ປີ. “ວິທີການ” ແມ່ນໃກ້ກັບເຄື່ອງວິເຄາະອິນຟາເຣດ, ຕະຫຼອດຂະບວນການບໍ່ໄດ້ໃຊ້ສານເຄມີ, ບໍ່ມີນ້ຳເປື້ອນ ແລະ ອາຍພິດ. ສ່ວນ “ສິ່ງແວດລ້ອມ” ແມ່ນມີລະບົບລະບາຍອາກາດທີ່ມີປະສິດທິພາບສູງ, ເຊິ່ງຖືກເອີ້ນວ່າ “ທ່ານປອດ”.

ບໍລິສັດ ເພີເຟັກ (ຈີນ) ຈຳກັດ ສາຂາໂຮງງານຜະລິດພາກໃຕ້ ໄດ້ສ້າງສຳເລັດໃນປີ 2019, ດ້ວຍການລົງທຶນສະສົມເກືອບ 500 ລ້ານຢວນ ເພື່ອການຜະລິດອັດສະລິຍະ, ສ້າງຂຶ້ນຕາມມາດຕະຖານອຸດສາຫະກຳແບບ 4.0 ໃນປີ 2024, ໄດ້ຜ່ານການກວດສອບ “ໂຮງງານທີ່ບໍ່ມີສິ່ງເສດເຫຼືອ” ຊຸດທຳອິດຂອງນະຄອນຈິງຊານ.

“ພະຍາດອາຊີບສີຂຽວບໍ່ແມ່ນພະຍາດ, ແຕ່ເປັນພາລະກິດ.” ທ່ານ ຫຼີນ ຊ່າວພີ ເວົ້າດ້ວຍສຳນຽງກວາງຕຸ້ງ. ຜູ້ຄົນທີ່ຢູ່ລຸ່ມເວທີໄດ້ມີສຽງຫົວຂຶ້ນ ແລະ ຫຼັງຈາກມີສຽງຫົວແລ້ວ ກໍຮູ້ສຶກວ່າຄຳເວົ້ານີ້ ບໍ່ແມ່ນເລື່ອງຕະຫຼົກທັງໝົດ. ຢູ່ໂຮງງານເພີເຟັກ, ການຜະລິດສີຂຽວບໍ່ແມ່ນຄຳຂວັນຊື່ໆ, ແຕ່ເປັນຄວາມລຶ້ງເຄີຍທີ່ທຸກຄົນມີ.

**ປຶ້ມບັນຊີສຳລັບວິຖີຊີວິດແບບສີຂຽວ**

ນະຄອນຊູໂຈ່ວ ແຂວງເຈີ້ຈຽງ, ເວລາ 7:30 ຕອນເຊົ້າ. ນາງ ຈຽງຢຽນ ທີ່ເປັນພະນັກງານຫ້ອງການໄດ້ຍ່າງອອກຈາກເຮືອນ ແລະ ເປີດ “ບັນຊີກາກບອນສ່ວນບຸກຄົນ” ໃນແອັບ UnionPay, ໃຊ້ຄະແນນກາກບອນແລກປ່ຽນເອົາບັດຂີ່ລົດຖີບໄຟຟ້າສາທາລະນະ. ໃຊ້ເວລາຂີ່ລົດຖີບຈາກເຮືອນໄປຫາບ່ອນເຮັດວຽກ 15 ນາທີ ຈ່າຍພຽງ 1 ເຊັນ.

ຄະແນນເຫຼົ່ານີ້ໄດ້ມາແນວໃດ? ການຂີ່ລົດເມ, ການຂີ່ລົດຖີບ, ການຊຳລະຄ່ານ້ຳ-ຄ່າໄຟຟ້າອອນລາຍ, ການນັດໝາຍເກັບຂີ້ເຫຍື້ອເຖິງທີ່... ທຸກໆສິ່ງເລັກນ້ອຍລ້ວນແຕ່ຖືກປ່ຽນເປັນປະລິມານການຫຼຸດຜ່ອນການປ່ອຍກາກບອນ ແລະ ເກັບໄວ້ໃນບັນຊີກາກບອນສ່ວນບຸກຄົນ.

ນະຄອນຊູໂຈ່ວ ໄດ້ສ້າງຕັ້ງລະບົບນີ້ຕັ້ງແຕ່ປີ 2021, ຂໍ້ມູນພຶດຕິກຳສີຂຽວ ແລະ ກາກບອນຕ່ຳຂອງຊາວເມືອງຜ່ານການອະນຸຍາດແລ້ວ ໄດ້ຖືກລວບລວມເຂົ້າໃນເວທີຄລາວບໍລິຫານທາງລັດຖະບານ ຂອງຫ້ອງການຂໍ້ມູນຂັ້ນນະຄອນ, ເພື່ອສ້າງເປັນເອກະສານກາກບອນສະເພາະ. ປ້າຍ “ສີຂຽວເຂັ້ມ” ແມ່ນສິ່ງທີ່ນາງໄດ້ສະສົມມາເປັນເວລາດົນນານ.

ໃນເວລາພັກທ່ຽງ, ນາງ ຈຽງຢຽນ ໄດ້ເປີດໃຊ້ແອັບ “ເຈີຫຼີປ້ານ” (Zheliban) ເພື່ອສະໝັກໃບຢັ້ງຢືນປະກັນສັງຄົມຜ່ານລະບົບອອນລາຍ, ລະບົບໄດ້ສະສົມຄະແນນສະສົມອີກຄັ້ງໂດຍອັດຕະໂນມັດ. “ການສະສົມຄະແນນແມ່ນດ້ານໜຶ່ງ, ແຕ່ສິ່ງສຳຄັນແມ່ນມັນສະດວກແທ້ໆ.” ນາງກ່າວວ່າ, “ຫາກທຸກຄົນເດີນທາງໜ້ອຍລົງໜຶ່ງຄັ້ງ, ລວມກັນແລ້ວສາມາດຫຼຸດຜ່ອນການປ່ອຍກາກບອນໄດ້ຫຼາຍປານໃດ!”

ສິ່ງທີ່ເຮັດໃຫ້ລາວຮູ້ສຶກວ່າ “ບັນຊີ” ມີປະໂຫຍດແທ້ໆແມ່ນອີກເລື່ອງໜຶ່ງ. ລາວຢາກຊື້ລົດຍົນພະລັງງານໃໝ່ຄັນໜຶ່ງ, ສະນັ້ນລາວຈຶ່ງໄດ້ໄປສະໝັກ “ເງິນກູ້ປ່ຽນກາກບອນເປັນຄຳ” ຢູ່ທະນາຄານການຄ້າກະສິກຳຊູໂຈ່ວ. ພະນັກງານໄດ້ອະນຸມັດເງິນກູ້ພາຍໃນບໍ່ຮອດ 10 ນາທີ ໂດຍອີງຕາມບົດລາຍງານກາກບອນສ່ວນຕົວຂອງລາວ: ວົງເງິນສິນເຊື່ອໄດ້ເພີ່ມຂຶ້ນຈາກ 200.000 ຢວນ ເປັນ 300.000 ຢວນ ແລະ ອັດຕາດອກເບ້ຍໄດ້ຫຼຸດລົງຈາກ 3,3% ເປັນ 3%, ເຊິ່ງຊ່ວຍປະຢັດດອກເບ້ຍໄດ້ 900 ຢວນຕໍ່ປີ. ປັດຈຸບັນ, ນະຄອນຊູໂຈ່ວ ໄດ້ເປີດຜະລິດຕະພັນທາງດ້ານການເງິນ 46 ຊະນິດທີ່ເຊື່ອມຕໍ່ກັບບັນຊີກາກບອນ, ແລະ ຍອດເງິນກູ້ໄດ້ເກີນ 110 ຕື້ຢວນ. ວັນທີ 1 ພຶດສະພາ 2026, “ລະບຽບການກໍ່ສ້າງ ແລະ ນຳໃຊ້ບັນຊີກາກບອນຂອງນະຄອນ ຊູໂຈ່ວ” ໄດ້ມີຜົນບັງຄັບໃຊ້, ເຊິ່ງເປັນກົດລະບຽບສະເພາະທຳອິດຂອງຈີນໃນການສ້າງຕັ້ງລະບົບບັນຊີກາກບອນ.

ເງິນບໍ່ນັບວ່າຫຼາຍ, ແຕ່ມັນເຮັດໃຫ້ ນາງ ຈຽງຢຽນ ຮູ້ສຶກມີການຮັບຢ່າງແທ້ຈິງວ່າ: ທຸກໆການເລືອກວິຖີຊີວິດແບບສີຂຽວ ບໍ່ແມ່ນການເຮັດວຽກທີ່ເສຍໄປລ້າໆ.

(ສະໜອງຂໍ້ມູນໂດຍ: ວາລະສານ “ຈຳປາ” ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

www.yunnangateway.com